ທຶນສົ່ງເສີມສິລະປະຈາກ ສະພາສິລະປະພາກພື້ນຕົວເມືອງ (MRAC)

ຍິນດີຕ້ອນຮັບເຂົ້າສູ່ MRAC! ພວກເຮົາມີຄວາມດີໃຈທີ່ທ່ານສົນໃຈໃນໂຄງການຂອງພວກເຮົາ. MRAC ເປັນອົງການ ບໍ່ຫວັງຜົນກຳໄລ ທີ່ເຮັດວຽກ ເພື່ອຍົກສູງການເຂົ້າເຖິງສິລະປະແກ່ຊຸມຊົນໃນເຂດ 7 ຕົວເມືອງຄື: ເມືອງ ອາໂນກາ (Anoka), ຄາຣເວີ (Carver), ດາໂກຕາ (Dakota), ເຮັນເນປິນ (Hennepin), ຣເມຊີ (Ramsey), ສະກັອດ (Scott), ວໍຊິງຕັນ (Washington)
ໂດຍການສະຫນັບສະໜູນນັກສິລະປິນ ແລະ ອົງການຈັດຕັ້ງ ຕ່າງໆ.

MRAC ມີໂຄງການຊ່ວຍເຫຼືອສີ່ (4) ປະເພດ ຄື:

**ທຶນຊ່ວຍເຫຼືອລ້າແບບຍືດຫຍຸ່ນ (Flexible Support)** ແມ່ນໃຫ້ທຶນສູງເຖິງ 15,000 ໂດລາ ເພື່ອຊ່ວຍເຫຼືອກຸ່ມຕ່າງໆ ໃນການສ້າງ ແລະ ຮັກສາ ການເຂົ້າເຖິງສິລະປະຂອງ ຊາວເມືອງມິນເນໂຊຕາ (Minnesotans). ທີ່ຢູ່ຫຼັກຂອງກຸ່ມທີ່ມີສິດສະໝັກແມ່ນຕ້ອງຢູ່ ເມືອງ ອາໂນກາ (Anoka), ຄາຣເວີ (Carver), ດາໂກຕາ (Dakota), ເຮັນເນປິນ (Hennepin), ຣເມຊີ (Ramsey), ສະກັອດ (Scott) ຫຼື ວໍຊິງຕັນ (Washington)
ໂຄງການນີ້ສະຫນັບສະຫນູນການສ້າງໂຄງການສິລະປະ, ແລະ / ຫຼື ໂຄງການທີ່ສ້າງຄວາມເຂັ້ມແຂງດ້ານຄວາມອາດສາມາດຂອງອົງການຈັດຕັ້ງ ແລະ ການດຳເນີນງານຂອງກຸ່ມຕ່າງໆ ທີ່ສະໜອງການເຂົ້າເຖິງສິລະປະ. ກຳນົດປິດຮັບສະໝັກ ຮອບທີ 1 ແມ່ນ ວັນທີ 1 ສິງຫາ 2022, ເວລາ 11:59 ໂມງ. ກຳນົດປິດຮັບສະໝັກຮອບທີ 2 ແມ່ນ ວັນທີ 13 ກຸມພາ 2023, ເວລາ 11:59 ໂມງ.

**ທຶນຊ່ວຍເຫຼືອລ້າ ຜົນກະທົບດ້ານສິລະປະສຳລັບກຸ່ມ (Arts Impact for Groups)** ແມ່ນໃຫ້ທຶນສູງເຖິງ 10,000 ໂດລາສຳລັບກຸ່ມທີ່ນຳພາ ໂດຍຄົນຜິວດຳ, ຄົນພື້ນເມືອງ ຫຼື ຄົນຜິວສີ (BIPOC); ແລະ/ຫຼື ຄົນພິການ (PWD); ແລະ/ຫຼື ເລສບຽນ (Lesbian), ເກ (Gay), ຄົນສອງເພດ (Bisexual), ຜູ້ປ່ຽນເພດ (Transgender), ຜູ້ທີ່ມີເພດຊັບຊ້ອນ (Queer), ອິນເຕີເຊັກ (Intersex), ເອເຊັກໂຊ/ເອເຈັເດີ (Asexual / Agender), ຄົນສອງວິນຍານທາງເພດ (Two-Spirit) (LGBTQIA2+). ບັນດາກຸ່ມຕ້ອງຕັ້ງຢູ່ໃນ ເມືອງ ອາໂນກາ (Anoka), ຄາຣເວີ (Carver), ດາໂກຕາ (Dakota), ເຮັນເນປິນ (Hennepin), ຣເມຊີ (Ramsey), ສະກັອດ (Scott) ແລະ ວໍຊິງຕັນ (Washington) ທຶນຊ່ວຍເຫຼືອລ້ານີ້ ຖືກອອກແບບເພື່ອເປັນການລະດົມທຶນໃນການສະຫັບສະໜູນຄວາມສາມາດຂອງບັນດາກຸ່ມ ເພື່ອສ້າງການເຂົ້າເຖິງ ສິລະປະ. ກຳນົດປິດຮັບສະໝັກ ແມ່ນ ວັນທີ 21 ພະຈິກ 2022, ເວລາ 11:59 ໂມງ.

**ທຶນຊ່ວຍເຫຼືອລ້າ ຜົນກະທົບດ້ານສິລະປະສຳລັບບຸກຄົນ (Arts Impact for Individuals)** ແມ່ນໃຫ້ທຶນສູງເຖິງ 5,000 ໂດລາ ແກ່ໂຄງການສິລະປະ ໃນລັດ ມິນເນໂຊຕາ ທີ່ນຳພາໂດຍຄົນ ຜິວດຳ, ຄົນພື້ນເມືອງ ຫຼື ຄົນຜິວສີ (BIPOC); ແລະ/ຫຼື ຄົນພິການ (PWD); ແລະ/ຫຼື ເລສບຽນ (Lesbian), ເກ (Gay), ຄົນສອງເພດ (Bisexual), ຜູ້ປ່ຽນເພດ (Transgender), ຜູ້ທີ່ມີເພດຊັບຊ້ອນ (Queer), ອິນເຕີເຊັກ (Intersex), ເອເຊັກໂຊ/ ເອເຈັນເດີ (Asexual/Agender), ຄົນສອງວິນຍານທາງເພດ (Two-Spirit) (LGBTQIA2+). ຜູ້ສະໝັກຕ້ອງມີທີ່ຢູ່ຕົ້ນຕໍໃນເມືອງ ອາໂນກາ (Anoka), ຄາຣເວີ (Carver), ດາໂກຕາ (Dakota), ເຮັນເນປິນ (Hennepin), ຣເມຊີ (Ramsey), ສະກັອດ (Scott) ຫຼື ວໍຊິງຕັນ (Washington) ການຊ່ວຍເຫຼືອລ້ານີ້ ຖືກອອກແບບມາເພື່ອສະຫັບສະໜູນບຸກຄົນໃນຄວາມພະຍາຍາມນຳພາເພື່ອສ້າງການເຂົ້າເຖິງສິລະປະສຳລັບ ຊຸມຊົນ ແລະ / ຫຼື ໃນການມີສ່ວນຮ່ວມກັບຊຸມຊົນ ໂດຍຜ່ານຄວາມພະຍາຍາມທາງດ້ານສິລະປະ. ກຳນົດປິດຮັບສະໝັກແມ່ນ ວັນທີ 12 ທັນວາ 2022, ເວລາ 11:59 ໂມງ.

**ທຶນຊ່ວຍເຫຼືອລ້າ ຂັ້ນຕອນຕໍ່ໄປ (Next Step Fund)** ແມ່ນຖືກອອກແບບມາເພື່ອຊ່ວຍນັກສິລະປິນ ໃນການເຮັດໂຄງການທີ່ເນັ້ນໃສ່ເປົ້າໝາຍດ້ານ ສິລະປະ ແລະ/ຫຼື ການພັດທະນາວິຊາອາຊີບຂອງເຂົາເຈົ້າໃນຂົງເຂດວຽກງານສິລະປະໃຫ້ສຳເລັດ. ໂຄງການເຫຼົ່ານີ້ຄວນ ນຳສະເໜີຍຸດທະສາດທີ່ຈະຊ່ວຍ ໃຫ້ນັກສິລະປິນເອົາຊະນະອຸປະສັກທີ່ຂັດຂວາງຄວາມສຳເລັດ, ຮັກສາຄວາມສຳເລັດຢ່າງຕໍ່ເນື່ອງໃນອາຊີບ ສິລະປະຂອງຕົນ, ແລະ / ຫຼື ຊ່ວຍໃຫ້ເຂົາເຈົ້າ ໄດ້ນຳໃຊ້ໂອກາດ. ທຶນຊ່ວຍເຫຼືອລ້າ ຂັ້ນຕອນຕໍ່ໄປ (Next Step Fund) ແມ່ນໄດ້ຮັບທຶນ ຈາກມູນນິທິ ມິກໄນ (McKnight Foundation), ເຊິ່ງໃຫ້ການຊ່ວຍເຫຼືອໂຄງການສູງເຖິງ $5,000 ແກ່ນັກສິລະປິນໃນທຸກຂົງເຂດ. ຜູ້ສະຫມັກສາມາດຢູ່ຊ່ວງໃດກໍ່ໄດ້ໃນສາຂາອາຊີບຕົນ, ແຕ່ຕ້ອງສາມາດໃຫ້ຕົວຢ່າງການເຮັດວຽກດ້ານສິນລະປະຕົ້ນສະບັບຂອງຕົນເອງ. ນັກສິລະປິນສ່ວນບຸກຄົນຕ້ອງມີທີ່ຢູ່ອາໃສຕົ້ນຕໍໃນເມືອງ ອາໂນກາ (Anoka), ຄາຣເວີ (Carver), ດາໂກຕາ (Dakota), ເຮັນເນປິນ (Hennepin), ຣເມຊີ (Ramsey), ສະກັອດ (Scott) ຫຼື ວໍຊິງຕັນ (Washington). ກຳນົດປິດຮັບສະໝັກແມ່ນ ວັນທີ 9 ມັງກອນ 2023, ເວລາ 11:59 ໂມງ.

ມີລາຍລະອຽດເພີ່ມເຕີມຢູ່ www.mrac.org. ຖ້າທ່ານຕ້ອງການເອກະສານທີ່ແປແລ້ວ ຫຼື ຕ້ອງການການຊ່ວຍເຫຼືອເພື່ອເຂົ້າເຖິງຂໍ້ມູນ, ພວກເຮົາຍິນດີ ໃຫ້ການຊ່ວຍເຫຼືອ ໂດຍການແຈ້ງພາຍໃນ 2 ອາທິດ. ນອກນັ້ນ, ທ່ານຍັງສາມາດໂອ້ລົມກັບຜູ້ອຳນວຍການໂຄງການສຳລັບການຊ່ວຍເຫຼືອເພີ່ມເຕີມ. ກະລຸນາຕິດຕໍ່ພວກເຮົາທີ່ mrac@mrac.org.